ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------------------------

ສະພາແຫ່ງຊາດ ເລກທີ 01 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 17 ມິຖຸນາ 2006

# ກົດໝາຍ
# ວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1(ໃໝ່). ຈຸດປະສົງຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ**

ກົດໝາຍວ່າດ້ວຍສະພາແຫ່ງຊາດກຳນົດຫລັກການ, ລະບຽບການ ຈັດຕັ້ງ ແລະການເຄື່ອນໄຫວຂອງສະພາແຫ່ງຊາດ ແນໃສ່ສ້າງອົງການອຳນາດແຫ່ງລັດໃຫ້ເຂັ້ມແຂງ ເພື່ອຮັບປະກັນທາດແທ້ຂອງລັດ ທີ່ເປັນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະເພື່ອສິດຜົນປະໂຫຍດຂອງປະຊາຊົນ.

**ມາດຕາ 2. ທີ່ຕັ້ງ ແລະພາລະບົດບາດຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແມ່ນອົງການຕົວແທນແຫ່ງສິດອຳນາດ ແລະຜົນປະໂຫຍດຂອງປະຊາຊົນບັນດາເຜົ່າ, ເປັນອົງການອຳນາດແຫ່ງລັດ ທັງເປັນອົງການນິຕິບັນຍັດ ທີ່ມີສິດຕົກລົງບັນຫາພື້ນຖານຂອງປະເທດຊາດ, ຕິດຕາມກວດກາການເຄື່ອນໄຫວຂອງອົງການບໍລິຫານ, ສານປະຊາຊົນ ແລະອົງການໄອຍະການປະຊາຊົນ.

**ມາດຕາ 3(ໃໝ່). ສິດ ແລະໜ້າທີ່ລວມຂອງສະພາແຫ່ງຊາດ**

ສະພາແຫ່ງຊາດມີສິດ ແລະໜ້າທີ່ລວມດັ່ງນີ້ :

1. ສ້າງ, ຮັບຮອງເອົາ ຫລື ປ່ຽນແປງລັດຖະທຳມະນູນ;
2. ສ້າງ, ພິຈາລະນາ, ຮັບຮອງເອົາ, ປ່ຽນແປງ, ຍົກເລີກ ຫລືລົບລ້າງກົດໝາຍ;
3. ພິຈາລະນາ, ຮັບຮອງເອົາການກຳນົດ, ການປ່ຽນແປງ, ການຍົກເລີກ ຫລືການລົບລ້າງ ອັດຕາພາສີ ແລະສ່ວຍສາອາກອນ;

4. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ; ພິຈາລະນາ, ຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດໃນຕໍ່ໜ້າ;
5. ເລືອກຕັ້ງ ຫລືປົດຕຳແໜ່ງປະທານ, ຮອງປະທານ, ກຳມະການຄະນະປະຈຳສະພາແຫ່ງຊາດ, ສ້າງຕັ້ງ ຫລື ຍຸບເລີກບັນດາກຳມາທິການສະພາແຫ່ງຊາດ, ເລືອກຕັ້ງ ຫລື ປົດຕຳແໜ່ງບັນດາຫົວໜ້າກຳມາທິການ, ຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ຮອງຫົວໜ້າກຳມາທິການສະພາແຫ່ງຊາດ, ສ້າງຕັ້ງ ຫລື ຍຸບເລີກຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
6. ເລືອກຕັ້ງ ຫລື ປົດຕຳແໜ່ງປະທານປະເທດ ແລະຮອງປະທານປະເທດຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ;
7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ ຫລື ປົດຕຳແໜ່ງນາຍົກລັດຖະມົນຕີຕາມການສະເໜີຂອງປະທານປະເທດ;
8. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ, ການແຕ່ງຕັ້ງ, ການຍົກຍ້າຍ ຫລື ການປົດຕຳແໜ່ງສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ;
9. ເລືອກຕັ້ງ ຫລືປົດຕຳແໜ່ງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ;
10. ຕົກລົງສ້າງຕັ້ງ ຫລື ຍຸບເລີກກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະນະຄອນ, ຕົກລົງເຂດແດນຂອງແຂວງ ແລະນະຄອນ ຕາມການສະເໜີຂອງນາຍົກລັດຖະມົນຕີ;
11. ຕົກລົງໃຫ້ນິລະໂທດກຳ;
12. ຕົກລົງໃຫ້ສັດຕະຍາບັນ, ຍົກເລີກ ຫລືລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດຕາມກົດໝາຍ;
13. ຕົກລົງບັນຫາສົງຄາມ ຫລືສັນຕິພາບ;
14. ຕິດຕາມກວດກາການເຄົາລົບ ແລະການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະໂຄງການທີ່ມີຄວາມສຳຄັນລະດັບຊາດ;
15. ຍົກເລີກນິຕິກຳຂອງລັດຖະບານ, ນາຍົກລັດຖະມົນຕີ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ຂັດກັບລັດຖະທຳມະນູນ ແລະກົດໝາຍ. ສຳລັບນິຕິກຳຂອງສານປະຊາ

ຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດທີ່ກ່າວມານີ້ແມ່ນນິຕິກຳທີ່ບໍ່ກ່ຽວກັບການດຳເນີນຄະດີ;

16. ຕົກລົງກ່ຽວກັບການພົວພັນ, ຮ່ວມມືກັບລັດຖະສະພາ, ອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະສາກົນ;

17. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 4. ຫລັກການເຄື່ອນໄຫວຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ຈັດຕັ້ງ ແລະເຄື່ອນໄຫວຕາມຫລັກການລວມສູນປະຊາທິປະໄຕ, ປະຕິບັດໜ້າທີ່ວຽກງານຕາມລະບອບປະຊຸມ ແລະຕົກລົງບັນຫາໂດຍຖືເອົາຕາມສຽງສ່ວນຫລາຍ.

**ມາດຕາ 5. ອາຍຸການຂອງສະພາແຫ່ງຊາດ**

ສະພາແຫ່ງຊາດແຕ່ລະຊຸດ ມີອາຍຸການຫ້າປີ ຊຶ່ງເລີ່ມແຕ່ກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດນັ້ນ ໄປເຖິງກອງປະຊຸມຄັ້ງປະຖົມມະລືກຂອງສະພາແຫ່ງຊາດຊຸດໃໝ່.

ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຕ້ອງໃຫ້ແລ້ວຢ່າງຊ້າ ຫົກສິບວັນກ່ອນສະພາແຫ່ງຊາດຊຸດເກົ່າຈະໝົດອາຍຸການ.

ໃນກໍລະນີທີ່ເກີດສົງຄາມ ຫລື ມີສາເຫດອື່ນ ຊຶ່ງກໍ່ຄວາມຫຍຸ້ງຍາກໃຫ້ແກ່ການເລືອກຕັ້ງນັ້ນ ສະພາແຫ່ງຊາດຈະຕໍ່ອາຍຸການຂອງຕົນກໍໄດ້ ແຕ່ຕ້ອງດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຢ່າງຊ້າບໍ່ໃຫ້ເກີນຫົກເດືອນ ພາຍຫລັງສະພາບການໄດ້ກັບຄືນສູ່ປົກກະຕິ.

ໃນກໍລະນີທີ່ມີຄວາມຈຳເປັນ ສະພາແຫ່ງຊາດຈະດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ກ່ອນການໝົດອາຍຸການຂອງຕົນກໍໄດ້ ແຕ່ຕ້ອງໄດ້ຮັບຄວາມເຫັນດີຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກສະພາແຫ່ງຊາດທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 6. ງົບປະມານຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີງົບປະມານສະເພາະຂອງຕົນ ເພື່ອຮັບໃຊ້ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງສະພາແຫ່ງຊາດ.

## ໝວດທີ II
## ກອງປະຊຸມສະພາແຫ່ງຊາດ

**ມາດຕາ 7. ກອງປະຊຸມສະພາແຫ່ງຊາດ**

ສະພາແຫ່ງຊາດມີກອງປະຊຸມ ສາມ ປະເພດດັ່ງນີ້ :

1. ກອງປະຊຸມຄັ້ງປະຖົມມະລືກ;
2. ກອງປະຊຸມສະໄໝສາມັນ;
3. ກອງປະຊຸມສະໄໝວິສາມັນ.

**ມາດຕາ 8(ໃໝ່). ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ**

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ເປີດຂຶ້ນຢ່າງຊ້າ ຫົກສິບວັນ ຫລັງຈາກການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ ຊຶ່ງແມ່ນປະທານສະພາແຫ່ງຊາດຊຸດເກົ່າເປັນປະທານ ແລະຊີ້ນຳກອງປະຊຸມ ຈົນກວ່າໄດ້ເລືອກຕັ້ງປະທານສະພາແຫ່ງຊາດຊຸດໃໝ່.

ກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ຮັບຟັງການລາຍງານຂອງປະທານ ຫລື ຄະນະກຳມະການເລືອກຕັ້ງລະດັບຊາດ ກ່ຽວກັບຜົນຂອງການເລືອກຕັ້ງ ແລະຢັ້ງຢືນຄຸນລັກສະນະຂອງສະມາຊິກສະພາແຫ່ງຊາດ;
2. ເລືອກຕັ້ງປະທານ, ຮອງປະທານ ແລະກຳມະການຄະນະປະຈຳສະພາແຫ່ງຊາດຊຸດໃໝ່ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດຊຸດເກົ່າ;
3. ສ້າງຕັ້ງບັນດາກຳມາທິການຂອງສະພາແຫ່ງຊາດ;
4. ເລືອກຕັ້ງບັນດາຫົວໜ້າກຳມາທິການ, ຫົວໜ້າຫ້ອງວ່າການ ແລະຮອງຫົວໜ້າບັນດາກຳມາທິການຂອງສະພາແຫ່ງຊາດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດຊຸດໃໝ່;
5. ສ້າງຕັ້ງຄະນະລັດຖະສະພາສາກົນຂອງສະພາແຫ່ງຊາດ, ເລືອກຕັ້ງປະທານ, ຮອງປະທານ ແລະເລຂາທິການຄະນະລັດຖະສະພາສາກົນນັ້ນ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດຊຸດໃໝ່;
6. ເລືອກຕັ້ງປະທານປະເທດ ແລະຮອງປະທານປະເທດ ຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດຊຸດໃໝ່;
7. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານປະເທດ;
8. ພິຈາລະນາ, ຮັບຮອງເອົາໂຄງປະກອບກົງຈັກຂອງລັດຖະບານ ແລະການສະເໜີແຕ່ງຕັ້ງສະມາຊິກລັດຖະບານ ຕາມການສະເໜີຂອງນາຍົກລັດຖະມົນຕີ;
9. ເລືອກຕັ້ງປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ຕາມການສະເໜີຂອງປະທານປະເທດ;
10. ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ຕະຫລອດອາຍຸການຂອງລັດຖະບານ;
11. ພິຈາລະນາ ແລະ ຕົກລົງບັນຫາອື່ນທີ່ສຳຄັນ ເປັນຕົ້ນແຜນການສ້າງ, ປັບປຸງກົດໝາຍ ແລະແຜນການດຳເນີນງານຂອງສະພາແຫ່ງຊາດ.

**ມາດຕາ 9(ໃໝ່). ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ**

ສະພາແຫ່ງຊາດເປີດກອງປະຊຸມສະໄໝສາມັນປີລະສອງເທື່ອ, ເທື່ອທີໜຶ່ງເປີດຂຶ້ນໃນທ້າຍປີງົບປະມານ ລະຫວ່າງເດືອນ ມິຖຸນາ ຫາ ເດືອນ ກໍລະກົດ ແລະເທື່ອທີສອງ ໃນຕົ້ນປີງົບປະມານ ລະຫວ່າງເດືອນ ພະຈິກ ຫາ ເດືອນ ທັນວາ ໂດຍແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມ.

ກອງປະຊຸມສະໄໝສາມັນປະຈຳປີເທື່ອທີໜຶ່ງຂອງສະພາແຫ່ງຊາດ ມີສິດ ແລະໜ້າທີ່ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາບົດລາຍງານປະຈຳປີຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ; ພິຈາລະນາ, ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດປະຈຳສົກປີຕໍ່ໄປ;
2. ພິຈາລະນາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການປະຈຳປີ ແລະ ແຜນການປະຈຳສົກປີຕໍ່ໄປຂອງສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ;
3. ພິຈາລະນາ, ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການປະຈຳປີ ແລະແຜນການປະຈຳສົກປີຕໍ່ໄປຂອງສະພາແຫ່ງຊາດ;
4. ພິຈາລະນາ ແລະຕົກລົງບັນຫາອື່ນທີ່ສຳຄັນ ເປັນຕົ້ນແຜນການສ້າງ, ປັບປຸງກົດໝາຍ, ການເລືອກຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 2,4,5,6,7,8,9 ຂອງກົດໝາຍສະບັບນີ້ ຊຶ່ງເຫັນວ່າມີຄວາມຈຳເປັນ.

ກອງປະຊຸມສະໄໝສາມັນປະຈຳປີເທື່ອທີສອງຂອງສະພາແຫ່ງຊາດ ມີສິດ ແລະໜ້າທີ່ດັ່ງນີ້:

1. ພິຈາລະນາ, ຮັບຮອງເອົາກົດໝາຍສະບັບໃໝ່ ແລະສະບັບປັບປຸງ;
2. ພິຈາລະນາ, ຮັບຮອງເອົາບົດສະຫລຸບບັນຊີງົບປະມານຂາດຕົວ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳສົກປີຜ່ານມາ;
3. ພິຈາລະນາ, ຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ທົກເດືອນ ຕົ້ນປີ; ພິຈາລະນາ, ຮັບຮອງເອົາການດັດແກ້ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດທົກເດືອນທ້າຍປີຂອງລັດຖະບານ ຖ້າມີ;
4. ພິຈາລະນາບົດລາຍງານຂອງປະທານສານປະຊາຊົນສູງສຸດ ແລະ ໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍໃນທົກເດືອນຕົ້ນປີ ແລະແຜນການທົກເດືອນທ້າຍປີ;
5. ພິຈາລະນາ, ຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວໃນທົກເດືອນຕົ້ນປີ ແລະແຜນການເຄື່ອນໄຫວທົກເດືອນທ້າຍປີ ຂອງຄະນະປະຈຳສະພາແຫ່ງຊາດ;
6. ພິຈາລະນາ ແລະ ຕົກລົງບັນຫາອື່ນທີ່ສຳຄັນ ເປັນຕົ້ນການເລືອກຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂໍ້ 2,4,5,6,7,8,9 ຂອງກົດໝາຍສະບັບນີ້ ຊຶ່ງເຫັນວ່າມີຄວາມຈຳເປັນ.

**ມາດຕາ 10. ກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ**

ສະພາແຫ່ງຊາດຈະເປີດກອງປະຊຸມສະໄໝວິສາມັນກໍໄດ້ ໃນລະຫວ່າງສອງກອງປະຊຸມສະໄໝສາມັນ ເພື່ອພິຈາລະນາຕົກລົງບັນຫາທີ່ສຳຄັນ ແລະຮີບດ່ວນຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຫລື ຕາມການສະເໜີຂອງປະທານປະເທດ, ນາຍົກລັດຖະມົນຕີ ຫລື ສະມາຊິກສະພາແຫ່ງຊາດ ຢ່າງໜ້ອຍໜຶ່ງສ່ວນສີ່ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 11. ຫລັກການດຳເນີນກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດ ຈະດຳເນີນໄດ້ກໍຕໍ່ເມື່ອຫາກມີສະມາຊິກສະພາແຫ່ງຊາດເຂົ້າຮ່ວມຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ.

ກອງປະຊຸມສະພາແຫ່ງຊາດ ດຳເນີນໄປຢ່າງເປີດເຜີຍ. ໃນກໍລະນີທີ່ຈຳເປັນຄະນະປະຈຳສະພາແຫ່ງຊາດ ຈະຕົກລົງດຳເນີນກອງປະຊຸມປິດລັບກໍໄດ້.

ກອງປະຊຸມສະພາແຫ່ງຊາດ ມີຄະນະປະທານເປັນຜູ້ນຳພາ.

**ມາດຕາ 12. ການຮຽກໂຮມກອງປະຊຸມສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດເປັນຜູ້ຮຽກໂຮມກອງປະຊຸມສະພາແຫ່ງຊາດ.

ເອກະສານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະພາແຫ່ງຊາດ ຕ້ອງສົ່ງໃຫ້ສະມາຊິກສະພາແຫ່ງຊາດ ກ່ອນວັນເປີດກອງປະຊຸມ.

**ມາດຕາ 13(ໃໝ່). ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ**

ຜູ້ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ ມີສະມາຊິກສະພາແຫ່ງຊາດທັງໝົດ; ນອກຈາກນີ້ ຍັງມີສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ, ຜູ້ຕາງໜ້າອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ຕົວແທນຊັ້ນຄົນຕ່າງໆ. ສຳລັບຜູ້ເຂົ້າຮ່ວມທີ່ບໍ່ແມ່ນສະມາຊິກສະພາແຫ່ງຊາດນັ້ນ ອາດຈະໄດ້ຮັບອະນຸຍາດໃຫ້ປະກອບຄວາມຄິດຄວາມເຫັນຕໍ່ກອງປະຊຸມ ແຕ່ຫາກບໍ່ມີສິດລົງຄະແນນສຽງ.

ສະມາຊິກສະພາແຫ່ງຊາດ ແລະ ຜູ້ເຂົ້າຮ່ວມອື່ນທີ່ກ່ຽວຂ້ອງ ຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ວາລະຂອງກອງປະຊຸມທີ່ໄດ້ວາງອອກ.

**ມາດຕາ 14(ໃໝ່). ມະຕິຂອງກອງປະຊຸມສະພາແຫ່ງຊາດ**

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຕ້ອງມີເນື້ອໃນສັງລວມ, ກະທັດລັດ ໂດຍເລັງໃສ່ຈຸດປະສົງ ແລະລະດັບຄາດໝາຍຂອງກອງປະຊຸມນັ້ນ.

ການລົງມະຕິຂອງກອງປະຊຸມສະພາແຫ່ງຊາດ ແມ່ນດຳເນີນດ້ວຍການລົງຄະແນນສຽງຢ່າງເປີດເຜີຍ ຫລື ປິດລັບກໍໄດ້ ໂດຍອີງຕາມການຕົກລົງຂອງກອງປະຊຸມ.

ມະຕິຂອງກອງປະຊຸມສະພາແຫ່ງຊາດ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກທີ່ເຂົ້າຮ່ວມກອງປະຊຸມ ເວັ້ນເສຍແຕ່ໃນກໍລະນີການເລືອກຕັ້ງປະທານປະເທດ, ການເລືອກຕັ້ງສະມາຊິກສະພາແຫ່ງຊາດກ່ອນການໝົດອາຍຸການ ຂອງສະພາ

ແຫ່ງຊາດ ແລະການປ່ຽນແປງລັດຖະທຳມະນູນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54, 66 ແລະ 97 ຂອງລັດຖະທຳມະນູນ.

**ມາດຕາ 15. ບົດບັນທຶກຂອງກອງປະຊຸມສະພາແຫ່ງຊາດ**

ກອງປະຊຸມສະພາແຫ່ງຊາດແຕ່ລະເທື່ອ ຕ້ອງເຮັດບົດບັນທຶກ ໂດຍມີການເຊັນຢັ້ງຢືນຂອງຫົວໜ້າຄະນະເລຂານຸການ ແລະປະທານກອງປະຊຸມສະພາແຫ່ງຊາດ.

## ໝວດທີ III
## ໂຄງປະກອບຂອງສະພາແຫ່ງຊາດ

**ມາດຕາ 16. ໂຄງປະກອບຂອງສະພາແຫ່ງຊາດ**

ສະພາແຫ່ງຊາດ ມີໂຄງປະກອບດັ່ງນີ້:

- ປະທານສະພາແຫ່ງຊາດ;
- ຮອງປະທານສະພາແຫ່ງຊາດ;
- ຄະນະປະຈຳສະພາແຫ່ງຊາດ;
- ກຳມາທິການຂອງສະພາແຫ່ງຊາດ;
- ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ;
- ສະມາຊິກສະພາແຫ່ງຊາດ;
- ຫ້ອງວ່າການສະພາແຫ່ງຊາດ.

**ມາດຕາ 17. ອາຍຸການ**

ອາຍຸການຂອງປະທານ, ຮອງປະທານ, ຄະນະປະຈຳ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະຫ້ອງວ່າການສະພາແຫ່ງຊາດ ເທົ່າກັບອາຍຸການຂອງສະພາແຫ່ງຊາດ.

## ໝວດທີ IV
## ປະທານ ແລະຮອງປະທານສະພາແຫ່ງຊາດ

**ມາດຕາ 18(ໃໝ່). ປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດ ແມ່ນຜູ້ນຳສູງສຸດຂອງສະພາແຫ່ງຊາດ, ເປັນຜູ້ຊີ້ນຳ-ນຳພາວຽກງານຂອງສະພາແຫ່ງຊາດ ທັງເປັນຜູ້ຕາງໜ້າສະພາແຫ່ງຊາດ ໃນການພົວພັນວຽກງານພາຍໃນ ແລະຕ່າງປະເທດ.

**ມາດຕາ 19(ໃໝ່). ສິດ ແລະໜ້າທີ່ຂອງປະທານສະພາແຫ່ງຊາດ**

ປະທານສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ເປັນປະທານຄະນະປະທານກອງປະຊຸມສະພາແຫ່ງຊາດ;
2. ຊີ້ນໍາ, ນໍາພາ ແລະກວດກາການເຄື່ອນໄຫວວຽກງານພາຍໃນ ແລະຕ່າງປະເທດຂອງສະພາແຫ່ງຊາດ;
3. ປຶກສາຫາລື, ປະສານສົມທົບວຽກງານສໍາຄັນຂອງຊາດກັບປະທານປະເທດ, ນາຍົກລັດຖະມົນຕີ ແລະຫົວໜ້າອົງການຈັດຕັ້ງອື່ນໆທີ່ມີຄວາມຈໍາເປັນ;
4. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 20(ໃໝ່). ຮອງປະທານສະພາແຫ່ງຊາດ

ຮອງປະທານສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຄະນະປະທານໃນກອງປະຊຸມສະພາແຫ່ງຊາດ ແລະຈະໄດ້ຮັບຜິດຊອບວຽກງານຈໍານວນໜຶ່ງ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ.

ໃນກໍລະນີທີ່ປະທານສະພາແຫ່ງຊາດຕິດຂັດ ແມ່ນຮອງປະທານສະພາແຫ່ງຊາດ ຜູ້ທີ່ຖືກມອບໝາຍຈາກປະທານສະພາແຫ່ງຊາດ ເປັນຜູ້ວ່າການແທນ.

### ມາດຕາ 21. ຕາປະທັບຂອງປະທານສະພາແຫ່ງຊາດ

ຕາປະທັບຂອງປະທານສະພາແຫ່ງຊາດ ເປັນຮູບວົງມົນ, ຢູ່ໃນກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ", ເບື້ອງລຸ່ມຂຽນວ່າ "ປະທານສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ V
## ຄະນະປະຈໍາສະພາແຫ່ງຊາດ

### ມາດຕາ 22. ທີ່ຕັ້ງ ແລະພາລະບົດບາດຂອງຄະນະປະຈໍາສະພາແຫ່ງຊາດ

ຄະນະປະຈໍາສະພາແຫ່ງຊາດ ແມ່ນອົງການປະຈໍາການຂອງສະພາແຫ່ງຊາດ, ປະຕິບັດໜ້າທີ່ແທນສະພາແຫ່ງຊາດ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ.

### ມາດຕາ 23(ໃໝ່). ສິດ ແລະໜ້າທີ່ຂອງຄະນະປະຈໍາສະພາແຫ່ງຊາດ

ຄະນະປະຈໍາສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດ ກ່ຽວກັບການຍົກຄຸນນະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;
2. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ, ແຜນການສ້າງ ແລະປັບປຸງກົດໝາຍຂອງສະພາແຫ່ງຊາດ ເພື່ອນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ ແລ້ວນໍາໄປຈັດຕັ້ງປະຕິບັດ;
3. ກະກຽມກອງປະຊຸມສະພາແຫ່ງຊາດ ເພື່ອຮັບປະກັນໃຫ້ສະພາແຫ່ງຊາດ ດໍາເນີນກອງປະຊຸມຕາມແຜນການທີ່ໄດ້ວາງໄວ້;

4. ຕີຄວາມໝາຍລັດຖະທຳມະນູນ ແລະກົດໝາຍຕ່າງໆ;
5. ຄົ້ນຄວ້າ, ສ້າງຮ່າງກົດໝາຍທີ່ຕົນຮັບຜິດຊອບ ເພື່ອສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ; ຄົ້ນຄວ້າ, ສ້າງຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ ທີ່ຕົນຮັບຜິດຊອບ ແລ້ວສະເໜີຕໍ່ປະທານປະເທດ ພິຈາລະນາ;
6. ອອກຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະລັດຖະບັນຍັດ ທີ່ສະພາແຫ່ງຊາດເປັນຜູ້ສ້າງຂຶ້ນ;
7. ຄົ້ນຄວ້າຮ່າງກົດໝາຍ ທີ່ອົງການຈັດຕັ້ງອື່ນສະເໜີມາ ເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ; ຄົ້ນຄວ້າຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ ທີ່ອົງການຈັດຕັ້ງອື່ນສະເໜີມາ, ເພື່ອນຳສະເໜີຕໍ່ປະທານປະເທດ ພິຈາລະນາ ແລະ ຄົ້ນຄວ້າຮ່າງນິຕິກຳອື່ນທີ່ສຳຄັນ;
8. ໂຄສະນາ, ເຜີຍແຜ່ລັດຖະທຳມະນູນ, ກົດໝາຍ ແລະນິຕິກຳອື່ນໆ;
9. ແນະນຳອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງໃຫ້ຜັນຂະຫຍາຍ ແລະຈັດຕັ້ງປະຕິບັດກົດໝາຍທີ່ປະກາດໃຊ້ ລວມທັງໃຫ້ປະເມີນຜົນຂອງການຈັດຕັ້ງປະຕິບັດກົດໝາຍນັ້ນ;
10. ກຳນົດໂຄງປະກອບ, ສິດ ແລະໜ້າທີ່ຂອງກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຫ້ອງວ່າການຂອງສະພາແຫ່ງຊາດ;
11. ກະກຽມການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດໃໝ່;
12. ພິຈາລະນາ, ຮັບຮອງເອົາການສະເໜີແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງລັດຖະມົນຕີ ຫລື ຫົວໜ້າອົງການທຽບເທົ່າກະຊວງໃນກໍລະນີທີ່ຈຳເປັນ ແລ້ວລາຍງານໃຫ້ກອງປະຊຸມສະພາແຫ່ງຊາດຖັດໄປນັ້ນ ພິຈາລະນາ, ຮັບຮອງເອົາ;
13. ສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາຕົກລົງກ່ຽວກັບການໃຫ້ອະໄພຍະໂທດ;
14. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະໂຄງການທີ່ມີຄວາມສຳຄັນລະດັບຊາດຂອງລັດຖະບານ, ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ, ອົງການປົກຄອງແຂວງ, ນະຄອນ ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດກອງປະຊຸມ;
15. ຄົ້ນຄວ້າບົດສະຫລຸບບັນຊີງົບປະມານຂາດຕົວ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດໃນສົກປີຜ່ານມາເພື່ອນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;
16. ໂຈະການຈັດຕັ້ງປະຕິບັດນິຕິກຳຂອງລັດຖະບານ, ນາຍົກລັດຖະມົນຕີ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ເຈົ້າແຂວງ, ເຈົ້າຄອງນະຄອນ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ ຫລືມະຕິຂອງກອງປະຊຸມສະພາແຫ່ງຊາດ ແລ້ວນຳສະເໜີຕໍ່ກອງປະຊຸມສະພາແຫ່ງຊາດຖັດໄປນັ້ນ ພິຈາລະນາ. ສຳລັບນິຕິກຳຂອງສານ

ປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດທີ່ກ່າວມານີ້ ແມ່ນນິຕິກຳທີ່ບໍ່ກ່ຽວກັບການດຳເນີນຄະດີ;

17. ຕົກລົງກ່ຽວກັບການໃຫ້ ຫລືການປະສົມຊາດລາວ;
18. ແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຫົວໜ້າ, ຮອງຫົວໜ້າຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ;
19. ແຕ່ງຕັ້ງ ຫລື ປົດຕຳແໜ່ງຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ, ກຳມະການປະຈຳການຂອງກຳມາທິການ ແລະ ຫົວໜ້າກົມຕ່າງໆ ຂອງຫ້ອງວ່າການສະພາແຫ່ງຊາດ;
20. ແຕ່ງຕັ້ງ, ຍົກຍ້າຍ ຫລືປົດຕຳແໜ່ງບັນດາຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ, ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ ແລະສານທະຫານ;
21. ຊີ້ນຳ, ນຳພາ ການເຄື່ອນໄຫວວຽກງານ ແລະຮັບການລາຍງານສ່ອງແສງຂອງບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະຫ້ອງວ່າການສະພາແຫ່ງຊາດ;
22. ຄົ້ນຄວ້າ, ພິຈາລະນາ ຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕາມພາລະບົດບາດຂອງຕົນ;
23. ອອກມະຕິຕົກລົງ ແລະຄຳແນະນຳ;
24. ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການປະຕິບັດໜ້າທີ່ວຽກງານຂອງຕົນໃນລະຫວ່າງສອງກອງປະຊຸມ;
25. ແຕ່ງຕັ້ງຄະນະກຳມະການສະເພາະກິດ ເພື່ອປະຕິບັດໜ້າທີ່ໃດໜຶ່ງ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນ;
26. ປະສານສົມທົບກັບອົງການຈັດຕັ້ງພັກ, ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ແນວລາວສ້າງຊາດ ແລະອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;
27. ພົວພັນ,ຮ່ວມມືກັບລັດຖະສະພາ ແລະອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະສາກົນ;
28. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 24. ໂຄງປະກອບຂອງຄະນະປະຈຳສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ປະກອບດ້ວຍ:

- ປະທານ;
- ຮອງປະທານ;
- ກຳມະການຈຳນວນໜຶ່ງ.

ປະທານ ແລະຮອງປະທານສະພາແຫ່ງຊາດເປັນທັງປະທານ ແລະຮອງປະທານຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 25 (ໃໝ່). ການແບ່ງຄວາມຮັບຜິດຊອບພາຍໃນຄະນະປະຈໍາສະພາແຫ່ງຊາດ**

ປະທານຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ຊີ້ນໍາ, ນໍາພາລວມວຽກງານຂອງຄະນະປະຈໍາສະພາແຫ່ງຊາດ.

ປະທານຄະນະປະຈໍາສະພາແຫ່ງຊາດ ຈະມອບໝາຍໃຫ້ຮອງປະທານ ຫລື ກໍາມະການຄະນະປະຈໍາທ່ານໃດທ່ານໜຶ່ງເຮັດໜ້າທີ່ແທນໃນເວລາປະທານຕິດຂັດ.

ຮອງປະທານຄະນະປະຈໍາສະພາແຫ່ງຊາດ ມີໜ້າທີ່ຊ່ວຍປະທານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ, ເປັນຜູ້ຊີ້ນໍາວຽກງານຈໍານວນໜຶ່ງ ແລະຈະໄດ້ຮັບຜິດຊອບວຽກງານອື່ນອີກຕາມການມອບໝາຍຂອງປະທານຄະນະປະຈໍາສະພາແຫ່ງຊາດ.

ກໍາມະການຂອງຄະນະປະຈໍາສະພາແຫ່ງຊາດ ປະຕິບັດສິດ ແລະໜ້າທີ່ຂອງຄະນະປະຈໍາສະພາແຫ່ງຊາດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້ ແລະອາດຈະຖືກມອບໝາຍໃຫ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການຕົກລົງຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 26 (ໃໝ່). ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ**

ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ໂດຍແມ່ນປະທານຄະນະປະຈໍາສະພາແຫ່ງຊາດເປັນຜູ້ຮຽກໂຮມ.

ກອງປະຊຸມເປີດກວ້າງຂອງຄະນະປະຈໍາສະພາແຫ່ງຊາດ ຈະເຊີນບຸກຄົນ ຫລືການຈັດຕັ້ງໃດໜຶ່ງ ທີ່ກ່ຽວຂ້ອງເຂົ້າຮ່ວມນໍາກໍໄດ້ ຕາມການຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ. ແຂກທີ່ຖືກເຊີນເຂົ້າຮ່ວມກອງປະຊຸມນັ້ນມີສິດອອກຄໍາເຫັນ ແຕ່ບໍ່ມີສິດລົງຄະແນນສຽງ.

ໃນກໍລະນີທີ່ປະທານຄະນະປະຈໍາສະພາແຫ່ງຊາດຕິດຂັດ ແມ່ນຮອງປະທານຜູ້ທີ່ຖືກມອບໝາຍ ຈາກປະທານນັ້ນເປັນຜູ້ຮຽກໂຮມ ແລະນໍາພາກອງປະຊຸມ.

ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ຈະເປີດຂຶ້ນໄດ້ກໍຕໍ່ເມື່ອມີກໍາມະການຢ່າງໜ້ອຍສອງສ່ວນສາມເຂົ້າຮ່ວມ.

ຄະນະປະຈໍາສະພາແຫ່ງຊາດ ຈະເປີດກອງປະຊຸມຮ່ວມກັບລັດຖະບານ, ສານປະຊາຊົນສູງສຸດ, ໄອຍະການປະຊາຊົນສູງສຸດ ຢ່າງໜ້ອຍປີລະສອງເທື່ອ.

**ມາດຕາ 27 (ໃໝ່). ເນື້ອໃນກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ**

ເນື້ອໃນທີ່ຈະນໍາມາພິຈາລະນາ ຢູ່ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ຕ້ອງເປັນບັນຫາສໍາຄັນ, ມີຈຸດສຸມ ພ້ອມກັນນັ້ນກໍຕ້ອງສົ່ງເອກະສານ ຫລື ແຈ້ງເນື້ອໃນຂອງກອງປະຊຸມໃຫ້ກໍາມະການຂອງຄະນະປະຈໍາສະພາແຫ່ງຊາດ ລວມທັງແຂກທີ່ຖືກເຊີນຊາບລ່ວງໜ້າ ກ່ອນວັນເປີດກອງປະຊຸມ.

ກອງປະຊຸມຂອງຄະນະປະຈໍາສະພາແຫ່ງຊາດ ແຕ່ລະເທື່ອຕ້ອງມີບົດບັນທຶກ ໂດຍມີການ

ເຊັນຂອງຜູ້ບັນທຶກ ແລະການເຊັນຢັ້ງຢືນຂອງປະທານກອງປະຊຸມ ພ້ອມທັງແຈ້ງຜົນຂອງກອງປະຊຸມ ໃຫ້ສະມາຊິກສະພາແຫ່ງຊາດຊາບ ແລະໃຫ້ສັງຄົມຮັບຮູ້ ໂດຍຜ່ານສື່ມວນຊົນ ຕາມແຕ່ລະກໍລະນີ.

**ມາດຕາ 28(ໃໝ່). ມະຕິຕົກລົງຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ**

ມະຕິຕົກລົງຂອງກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຈະມີຄຸນຄ່າໄດ້ ກໍຕໍ່ເມື່ອໄດ້ຮັບສຽງສ່ວນຫລາຍຂອງຈໍານວນກໍາມະການທີ່ເຂົ້າຮ່ວມກອງປະຊຸມ.

**ມາດຕາ 29. ຕາປະທັບຂອງຄະນະປະຈໍາສະພາແຫ່ງຊາດ**

ຕາປະທັບຂອງຄະນະປະຈໍາສະພາແຫ່ງຊາດເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ", ເບື້ອງລຸ່ມຂຽນວ່າ " ຄະນະປະຈໍາສະພາແຫ່ງຊາດ" ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ VI
## ກໍາມາທິການຂອງສະພາແຫ່ງຊາດ

**ມາດຕາ 30(ໃໝ່). ທີ່ຕັ້ງ ແລະພາລະບົດບາດຂອງກໍາມາທິການສະພາແຫ່ງຊາດ**

ກໍາມາທິການສະພາແຫ່ງຊາດ ແມ່ນອົງການເສນາທິການຂອງກອງປະຊຸມສະພາແຫ່ງຊາດ ແລະຄະນະປະຈໍາສະພາແຫ່ງຊາດ, ມີພາລະບົດບາດຊ່ວຍກອງປະຊຸມສະພາແຫ່ງຊາດ ແລະຄະນະປະຈໍາສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດ ຕາມສິດ ແລະໜ້າທີ່ຂອງແຕ່ລະກໍາມາທິການ .

**ມາດຕາ 31(ໃໝ່). ບັນດາກໍາມາທິການຂອງສະພາແຫ່ງຊາດ**

ບັນດາກໍາມາທິການຂອງສະພາແຫ່ງຊາດ ມີດັ່ງນີ້:

1. ກໍາມາທິການກົດໝາຍ;
2. ກໍາມາທິການເສດຖະກິດແຜນການ ແລະການເງິນ;
3. ກໍາມາທິການວັດທະນະທໍາ-ສັງຄົມ;
4. ກໍາມາທິການບັນດາເຜົ່າ;
5. ກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ກໍາມາທິການ ການຕ່າງປະເທດ.

ໃນກໍລະນີທີ່ຈໍາເປັນ ຄະນະປະຈໍາສະພາແຫ່ງຊາດຈະສະເໜີຕໍ່ກອງປະຊຸມໃດໜຶ່ງ ຂອງສະພາແຫ່ງຊາດ ເພື່ອສ້າງຕັ້ງກໍາມາທິການອື່ນຕື່ມອີກກໍໄດ້.

**ມາດຕາ 32(ໃໝ່). ສິດ ແລະໜ້າທີ່ລວມຂອງບັນດາກໍາມາທິການ**

ບັນດາກໍາມາທິການມີສິດ ແລະໜ້າທີ່ລວມໃນການປະຕິບັດວຽກງານ ທີ່ນອນຢູ່ໃນຄວາມ

ຮັບຜິດຊອບຂອງຕົນ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ດັ່ງນີ້:

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ;
2. ຄົ້ນຄວ້າ ແລະປະກອບຄວາມເຫັນໃສ່ຮ່າງກົດໝາຍ, ຮ່າງລັດຖະບັນຍັດ, ຮ່າງລັດຖະດຳລັດ, ຮ່າງດຳລັດ ແລະຮ່າງນິຕິກຳອື່ນໆ ທີ່ພາກສ່ວນກ່ຽວຂ້ອງສະເໜີມາ;
3. ຄົ້ນຄວ້າກ່ຽວກັບການຕີຄວາມໝາຍ, ອະທິບາຍກົດໝາຍ ທີ່ກ່ຽວຂ້ອງກັບກຳມາທິການຂອງຕົນ;
4. ຄົ້ນຄວ້າກ່ຽວກັບການໂຈະການຈັດຕັ້ງປະຕິບັດ, ການປັບປຸງ, ຍົກເລີກ ຫລືລົບລ້າງກົດໝາຍ ແລະນິຕິກຳອື່ນ;
5. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະໂຄງການທີ່ມີຄວາມສຳຄັນລະດັບຊາດ;
6. ຄົ້ນຄວ້າ ແລະປະກອບຄວາມເຫັນໃສ່ຮ່າງແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ;
7. ຄົ້ນຄວ້າກ່ຽວກັບການໃຫ້ສັດຕະຍາບັນ ຫລື ລົບລ້າງສົນທິສັນຍາ, ສັນຍາທີ່ໄດ້ເຊັນກັບຕ່າງປະເທດ;
8. ສະເໜີບັນຫາ ແລະມາດຕະການແກ້ໄຂທີ່ພົວພັນກັບວຽກງານຂອງຕົນ;
9. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 33(ໃໝ່). ສິດ ແລະໜ້າທີ່ສະເພາະຂອງແຕ່ລະກຳມາທິການ**

ສິດ, ໜ້າທີ່ ແລະຂອບເຂດຮັບຜິດຊອບສະເພາະຂອງແຕ່ລະກຳມາທິການນັ້ນ ແມ່ນຄະນະປະຈຳສະພາແຫ່ງຊາດເປັນຜູ້ກຳນົດ.

**ມາດຕາ 34(ໃໝ່). ໂຄງປະກອບຂອງກຳມາທິການສະພາແຫ່ງຊາດ**

ໂຄງປະກອບຂອງກຳມາທິການສະພາແຫ່ງຊາດ ມີດັ່ງນີ້:

- ຫົວໜ້າ;
- ຮອງຫົວໜ້າຈຳນວນໜຶ່ງ;
- ກຳມະການທີ່ເປັນສະມາຊິກສະພາແຫ່ງຊາດ ແລະສັງກັດຢູ່ກຳມາທິການນັ້ນ.

**ມາດຕາ 35(ໃໝ່). ການແບ່ງຄວາມຮັບຜິດຊອບພາຍໃນກຳມາທິການຂອງສະພາແຫ່ງຊາດ**

ຫົວໜ້າກຳມາທິການຂອງສະພາແຫ່ງຊາດ ເປັນຜູ້ຊີ້ນຳວຽກງານ ແລະນຳພາກອງປະຊຸມຂອງກຳມາທິການ, ຕາງໜ້າໃຫ້ກຳມາທິການລາຍງານ ແລະສະເໜີວຽກງານຕໍ່ຄະນະປະຈຳ ແລະກອງປະຊຸມສະພາແຫ່ງຊາດ.

ຮອງຫົວໜ້າກຳມາທິການເປັນຜູ້ຊ່ວຍຫົວໜ້າກຳມາທິການ ໃນການຈັດຕັ້ງປະຕິບັດໜ້າ

ທີ່ວຽກງານຂອງກຳມາທິການ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກຳມາທິການ.

ໃນກໍລະນີທີ່ຫົວໜ້າກຳມາທິການຕິດຂັດ ແມ່ນຮອງຫົວໜ້າກຳມາທິການຜູ້ທີ່ຖືກມອບໝາຍຈາກຫົວໜ້າກຳມາທິການເປັນຜູ້ວ່າການແທນ.

ກຳມະການຂອງກຳມາທິການ ປະຕິບັດສິດແລະໜ້າທີ່ຂອງກຳມາທິການທີ່ຕົນສັງກັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 36(ໃໝ່). ກອງປະຊຸມຄົບຄະນະຂອງກຳມາທິການ**

ກອງປະຊຸມຄົບຄະນະຂອງກຳມາທິການ ເປີດຂຶ້ນຢ່າງໜ້ອຍປີລະເທື່ອກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໂດຍການຮຽກໂຮມ ແລະເປັນປະທານຂອງຫົວໜ້າກຳມາທິການທີ່ກ່ຽວຂ້ອງ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ.

ໃນກໍລະນີທີ່ຈຳເປັນ ກອງປະຊຸມຄົບຄະນະຂອງກຳມາທິການໃດໜຶ່ງຈະເປີດຂຶ້ນໃນເວລາໃດກໍໄດ້ ຫລືຈະເປີດຮ່ວມກັບກຳມາທິການອື່ນ ແລະເຊີນບຸກຄົນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມນຳກໍໄດ້ ຕາມການເຫັນດີຂອງຄະນະປະຈຳສະພາແຫ່ງຊາດ.

ກອງປະຊຸມຄົບຄະນະຂອງກຳມາທິການ ຕົ້ນຕໍແມ່ນພິຈາລະນາບົດລາຍງານການເຄື່ອນໄຫວວຽກງານໃນໄລຍະຜ່ານມາ ແລະ ທິດທາງວຽກງານໃນຕໍ່ໜ້າຂອງກຳມາທິການ, ພິຈາລະນາຮ່າງກົດໝາຍ, ນິຕິກຳ ແລະວຽກງານອື່ນໆ ໃນຂົງເຂດທີ່ຕົນຮັບຜິດຊອບ.

ກອງປະຊຸມຄົບຄະນະຂອງກຳມາທິການຕ້ອງເຮັດບົດບັນທຶກ ໂດຍມີການເຊັນຂອງຜູ້ບັນທຶກ ແລະການເຊັນຢັ້ງຢືນຂອງປະທານກອງປະຊຸມ ພ້ອມທັງລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດຊາບ.

**ມາດຕາ 37(ໃໝ່). ຕາປະທັບຂອງກຳມາທິການຂອງສະພາແຫ່ງຊາດ**

ກຳມາທິການຂອງສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ "ສະພາແຫ່ງຊາດ", ເບື້ອງລຸ່ມຂຽນຊື່ຂອງກຳມາທິການ ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ VII
## ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ

**ມາດຕາ 38(ໃໝ່). ທີ່ຕັ້ງ ແລະພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແມ່ນອົງການຈັດຕັ້ງໜຶ່ງຂອງສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ເປັນເສນາທິການຂອງກອງປະຊຸມສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ, ມີພາລະບົດບາດຊ່ວຍກອງປະຊຸມສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດຕາມສິດ, ໜ້າທີ່ຢູ່ເຂດເລືອກຕັ້ງຂອງຕົນ ແລະປະຕິບັດວຽກງານຕາມການມອບໝາຍຂອງຄະນະປະຈຳສະພາແຫ່ງຊາດ.

**ມາດຕາ 39(ໃໝ່). ສິດ ແລະໜ້າທີ່ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ປະຕິບັດສິດ ແລະໜ້າທີ່ໃນເຂດເລືອກຕັ້ງຂອງຕົນດັ່ງນີ້:

1. ສ້າງແຜນການເຄື່ອນໄຫວວຽກງານຂອງຕົນແຕ່ລະໄລຍະ;
2. ໂຄສະນາ, ເຜີຍແຜ່ແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມະຕິຂອງກອງປະຊຸມສະພາແຫ່ງຊາດ;ປຸກລະດົມປະຊາຊົນບັນດາເຜົ່າເຂົ້າຮ່ວມໃນການປົກປັກຮັກສາ ແລະພັດທະນາປະເທດຊາດ;
3. ເຂົ້າຮ່ວມກັບອົງການປົກຄອງແຂວງ, ນະຄອນ ໃນການຄົ້ນຄວ້າ, ປະກອບຄວາມເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ ແລະ ບັນຫາສຳຄັນອື່ນໆໃນເຂດເລືອກຕັ້ງຂອງຕົນ;
4. ຕິດຕາມກວດກາ ແລະຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ,ແຜນງົບປະມານແຫ່ງລັດ ແລະໂຄງການທີ່ມີຄວາມສຳຄັນລະດັບແຂວງ;
5. ຊີ້ນຳ, ນຳພາການເຄື່ອນໄຫວວຽກງານຂອງສະມາຊິກສະພາແຫ່ງຊາດ ແລະຫ້ອງວ່າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ;
6. ຮັບ ແລະພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ຕາມພາລະບົດບາດຂອງຕົນ;
7. ລາຍງານການເຄື່ອນໄຫວວຽກງານຂອງຕົນ ໃຫ້ຄະນະປະຈຳສະພາແຫ່ງຊາດ ແລະອົງການຈັດຕັ້ງທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;
8. ພົວພັນ ແລະປະສານສົມທົບກັບຂະແໜງການ, ອົງການຈັດຕັ້ງອື່ນໆ ແຕ່ຂັ້ນແຂວງລົງຮອດບ້ານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ; ໃນກໍລະນີທີ່ຈຳເປັນຈະເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບບັນຫາໃດໜຶ່ງກໍໄດ້;
9. ເຂົ້າຮ່ວມກອງປະຊຸມ, ການເຄື່ອນໄຫວ ແລະພິທີທີ່ສຳຄັນຕ່າງໆຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມຕ່າງໆ;
10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 40(ໃໝ່). ໂຄງປະກອບຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ໂຄງປະກອບຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງມີດັ່ງນີ້:

- ຫົວໜ້າ;
- ຮອງຫົວໜ້າ;
- ສະມາຊິກສະພາແຫ່ງຊາດທັງໝົດຢູ່ໃນເຂດເລືອກຕັ້ງ.

ເຂດເລືອກຕັ້ງໃດທີ່ມີຫົວໜ້າ ແລະຮອງຫົວໜ້າແມ່ນໃຫ້ຫົວໜ້າ ຫລືຮອງຫົວໜ້າ ເປັນຜູ້ປະຈຳການ.

**ມາດຕາ41(ໃໝ່). ການແບ່ງຄວາມຮັບຜິດຊອບພາຍໃນຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ຫົວໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເປັນຜູ້ຊີ້ນຳ ນຳພາວຽກງານລວມ, ເປັນປະທານກອງປະຊຸມຂອງຄະນະສະມາຊິກສະພາແຫ່ງຊາດ, ຕາງໜ້າໃຫ້ຄະນະລາຍງານ ແລະສະເໜີວຽກງານຕໍ່ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາແຫ່ງຊາດ ແລະອົງການຈັດຕັ້ງທີ່ກ່ຽວຂ້ອງ.

ຮອງຫົວໜ້າ ເປັນຜູ້ຊ່ວຍຫົວໜ້າຄະນະໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ ແລະຈະໄດ້ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

ໃນກໍລະນີທີ່ຫົວໜ້າຄະນະຕິດຂັດ ແມ່ນຮອງຫົວໜ້າເປັນຜູ້ວ່າການແທນ ຕາມການມອບໝາຍຂອງຫົວໜ້າຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

ຜູ້ປະຈຳການຂອງຄະນະ ເປັນຜູ້ຕາງໜ້າໃຫ້ຄະນະແກ້ໄຂວຽກງານປະຈຳວັນຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

**ມາດຕາ 42(ໃໝ່). ຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ໃນແຕ່ລະເຂດເລືອກຕັ້ງ ມີຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດ ຊຶ່ງເປັນອົງການເສນາທິການໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ມີຖານະທຽບເທົ່າກັບພະແນກການຂັ້ນແຂວງ, ມີໜ້າທີ່ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ແລະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງນັ້ນ.

**ມາດຕາ 43(ໃໝ່). ໂຄງປະກອບ, ສິດ ແລະໜ້າທີ່ຂອງຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ**

ໂຄງປະກອບ, ສິດ ແລະໜ້າທີ່ຂອງຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແມ່ນຄະນະປະຈຳສະພາແຫ່ງຊາດ ເປັນຜູ້ກຳນົດ.

**ມາດຕາ 44. ຕາປະທັບຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ**

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ມີຕາປະທັບສະເພາະຂອງຕົນເປັນຮູບວົງມົນ, ຢູ່ກາງວົງມົນມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງ ຂຽນວ່າ "ສະພາແຫ່ງຊາດ", ຢູ່ເບື້ອງລຸ່ມຂຽນວ່າ "ຄະນະສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ... ແຂວງ ຫລືນະຄອນ... " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

# ໝວດທີ VIII
# ສະມາຊິກສະພາແຫ່ງຊາດ

**ມາດຕາ 45(ໃໝ່). ທີ່ຕັ້ງຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ເປັນຕົວແທນແຫ່ງມານະຈິດ, ສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະຢູ່ໃຕ້ການກວດກາຂອງປະຊາຊົນ.

**ມາດຕາ 46. ອາຍຸການຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ໃນກໍລະນີທີ່ມີການເລືອກຕັ້ງສະມາຊິກສະພາແຫ່ງຊາດແທນນັ້ນ ອາຍຸການຂອງສະມາຊິກສະພາແຫ່ງຊາດທີ່ໄດ້ຮັບເລືອກຕັ້ງແທນ ຈະເລີ່ມແຕ່ກອງປະຊຸມສະພາແຫ່ງຊາດທີ່ຖັດຈາກການເລືອກຕັ້ງແທນນັ້ນ ໄປເຖິງວັນເປີດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດໃໝ່.

**ມາດຕາ 47(ໃໝ່). ສິດ ແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ມີສິດ ແລະໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະຈັດຕັ້ງປະຕິບັດແນວທາງ, ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ;
2. ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະມະຕິຂອງກອງປະຊຸມສະພາແຫ່ງຊາດ, ປຸກລະດົມປະຊາຊົນບັນດາເຜົ່າ ແລະຊັ້ນຄົນເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ,ແຜນພັດທະນາເສດຖະກິດ-ສັງຄົມ ແລະແຜນງົບປະມານແຫ່ງລັດ, ເຂົ້າຮ່ວມໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;
3. ເຂົ້າຮ່ວມກັບອົງການປົກຄອງທ້ອງຖິ່ນ ເປັນຕົ້ນຫ້ອງວ່າການ ແລະພະແນກການອ້ອມຂ້າງແຂວງ ໃນການຄົ້ນຄວ້າ, ປະກອບຄຳເຫັນໃສ່ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງທ້ອງຖິ່ນ ແລະບັນຫາສຳຄັນອື່ນໆ ໃນເຂດເລືອກຕັ້ງຂອງຕົນ;
4. ເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດ, ຄົ້ນຄວ້າ, ປະກອບຄຳເຫັນຕໍ່ບັນຫາທີ່ຍົກຂຶ້ນອະພິປາຍ ແລະລົງຄະແນນສຽງດ້ວຍຄວາມຮັບຜິດຊອບ.

   ໃນກໍລະນີມີຄວາມຈຳເປັນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ ສະມາຊິກສະພາແຫ່ງຊາດ ຕ້ອງໄດ້ຮັບອະນຸຍາດຈາກຄະນະປະຈຳສະພາແຫ່ງຊາດເສຍກ່ອນ;
5. ຕັ້ງຄຳຖາມຕໍ່ປະທານປະເທດ, ປະທານສະພາແຫ່ງຊາດ, ຊັກຖາມນາຍົກລັດຖະມົນຕີ, ສະມາຊິກລັດຖະບານ, ປະທານສານປະຊາຊົນສູງສຸດ ແລະໄອຍະການປະຊາຊົນສູງສຸດ ໃນກອງປະຊຸມສະພາແຫ່ງຊາດ;

6. ໃຫ້ຄຳແນະນຳແກ່ພົນລະເມືອງ ກ່ຽວກັບການຍື່ນຄຳຮ້ອງທຸກ; ປະກອບຄຳຄິດຄຳເຫັນໃຫ້ແກ່ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກ່ຽວກັບການພິຈາລະນາຄຳຮ້ອງຂໍຄວາມເປັນທຳ ເພື່ອໃຫ້ຄະນະດັ່ງກ່າວ ພິຈາລະນາຕາມພາລະບົດບາດຂອງຕົນ;
7. ລາຍງານການເຄື່ອນໄຫວວຽກງານຂອງຕົນໃນແຕ່ລະໄລຍະ ໃຫ້ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະກຳມາທິການທີ່ຕົນສັງກັດ ຊາບ;
8. ລາຍງານການເຄື່ອນໄຫວວຽກງານຕໍ່ປະຊາຊົນ ໃນເຂດເລືອກຕັ້ງຂອງຕົນຢ່າງໜ້ອຍປີລະສອງເທື່ອ, ພົບປະ, ໃກ້ຊິດຕິດແທດກັບປະຊາຊົນ, ຊອກຮູ້ ແລະນຳເອົາຄວາມຄິດຄວາມເຫັນ, ຄວາມມຸ່ງມາດປາດຖະໜາ ແລະຄຳສະເໜີຂອງປະຊາຊົນ ເພື່ອສະເໜີຕໍ່ສະພາແຫ່ງຊາດ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ ພິຈາລະນາ, ແກ້ໄຂ;
9. ເຂົ້າຮ່ວມກອງປະຊຸມ, ການເຄື່ອນໄຫວ ແລະພິທີທີ່ສຳຄັນຕ່າງໆ ຂອງອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະອົງການຈັດຕັ້ງສັງຄົມຕ່າງໆ ໃນເຂດເລືອກຕັ້ງຂອງຕົນ;
10. ໄດ້ຮັບຂໍ້ມູນ, ຂ່າວສານຕ່າງໆ ທີ່ຈຳເປັນໃນການປະຕິບັດໜ້າທີ່ຂອງຕົນ;
11. ປະຕິບັດສິດ ແລະໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະລະບຽບພາຍໃນຂອງສະພາແຫ່ງຊາດ.

**ມາດຕາ 48(ໃໝ່). ການສັງກັດ ແລະການຄວບຕຳແໜ່ງຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດແຕ່ລະທ່ານ ຕ້ອງສັງກັດຢູ່ໃນກຳມາທິການໃດໜຶ່ງຂອງສະພາແຫ່ງຊາດ ແລະສາມາດຄວບຕຳແໜ່ງໄດ້.

ສະມາຊິກສະພາແຫ່ງຊາດ ຕ້ອງໄດ້ປະຕິບັດພາລະບົດບາດ, ສິດ ແລະໜ້າທີ່ຂອງສະມາຊິກສະພາແຫ່ງຊາດຢ່າງຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49. ການສິ້ນສຸດການເປັນສະມາຊິກສະພາແຫ່ງຊາດ**

ການເປັນສະມາຊິກສະພາແຫ່ງຊາດ ຈະສິ້ນສຸດລົງໃນກໍລະນີດັ່ງນີ້ :

1. ເສຍຊີວິດ;
2. ລາອອກ;
3. ຖືກປົດອອກຈາກການເປັນສະມາຊິກສະພາແຫ່ງຊາດ;
4. ໝົດອາຍຸການຂອງສະມາຊິກສະພາແຫ່ງຊາດ.

**ມາດຕາ 50(ໃໝ່). ນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຈະໄດ້ຮັບການປະຕິບັດນະໂຍບາຍລວມ ຕາມຫລັກການ, ລະບຽບການຂອງລັດ ແລະຍັງຈະໄດ້ຮັບນະໂຍບາຍສະເພາະ ຊຶ່ງກຳນົດໄວ້ໃນລະບຽບການຕ່າງຫາກ ເພື່ອຮັບປະກັນການເຄື່ອນໄຫວວຽກງານຂອງຕົນ.

**ມາດຕາ 51. ອະພິສິດຂອງສະມາຊິກສະພາແຫ່ງຊາດ**

ສະມາຊິກສະພາແຫ່ງຊາດ ຈະບໍ່ຖືກຈັບຕົວ, ກັກຂັງ ຫລືດຳເນີນຄະດີອາຍາ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກສະພາແຫ່ງຊາດ ຫລື ຄະນະປະຈຳສະພາແຫ່ງຊາດ.

ຖ້າຫາກວ່າມີຄວາມຈຳເປັນ ຕ້ອງໄດ້ຈັບຕົວສະມາຊິກສະພາແຫ່ງຊາດ ໃນກໍລະນີທີ່ມີການກະທຳຜິດເຊິ່ງໜ້າ ຫລືກໍລະນີທີ່ຮີບດ່ວນນັ້ນ ອົງການທີ່ໄດ້ກັກຂັງສະມາຊິກສະພາແຫ່ງຊາດ ຕ້ອງລາຍງານທັນທີໃຫ້ສະພາແຫ່ງຊາດ ຫລືຄະນະປະຈຳສະພາແຫ່ງຊາດ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ. ການສືບສວນ-ສອບສວນ ບໍ່ໃຫ້ເປັນສາເຫດພາໃຫ້ສະມາຊິກສະພາແຫ່ງຊາດ ຜູ້ຖືກດຳເນີນຄະດີນັ້ນຂາດກອງປະຊຸມສະພາແຫ່ງຊາດ.

## ໝວດທີ IX
## ຫ້ອງວ່າການສະພາແຫ່ງຊາດ

**ມາດຕາ 52. ທີ່ຕັ້ງ ແລະພາລະບົດບາດຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ແມ່ນອົງການເສນາທິການຂອງສະພາແຫ່ງຊາດ ແລະຄະນະປະຈຳສະພາແຫ່ງຊາດ, ມີພາລະບົດບາດຄົ້ນຄວ້າ, ສະຫລຸບສັງລວມ, ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະການເງິນ, ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຂອງກອງປະຊຸມສະພາແຫ່ງຊາດ, ຄະນະປະຈຳ, ກຳມາທິການ ແລະສະມາຊິກສະພາແຫ່ງຊາດ.

**ມາດຕາ 53(ໃໝ່). ສິດ ແລະໜ້າທີ່ຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດມີສິດ ແລະໜ້າທີ່ດັ່ງນີ້:

1. ສ້າງຮ່າງແຜນການເຄື່ອນໄຫວວຽກງານ ຂອງສະພາແຫ່ງຊາດ ເພື່ອສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ແລະຮ່າງແຜນການຂອງຄະນະປະຈຳສະພາແຫ່ງຊາດ ເພື່ອສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;
2. ຂື້ນແຜນງົບປະມານຂອງສະພາແຫ່ງຊາດ ເພື່ອຜ່ານກອງປະຊຸມຄະນະປະຈຳສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາ;
3. ສະຫລຸບສັງລວມສະພາບການຮອບດ້ານ ກ່ຽວກັບການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ມະຕິຂອງກອງປະຊຸມສະພາແຫ່ງຊາດ ແລະມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ຢູ່ໃນຂອບເຂດທົ່ວປະເທດ ເພື່ອລາຍງານໃຫ້ຄະນະປະຈຳສະພາແຫ່ງຊາດ;
4. ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານ ຂອງຄະນະປະຈຳສະພາແຫ່ງຊາດ, ກຳມາທິການ ແລະສະມາຊິກສະພາແຫ່ງຊາດ;
5. ຈັດຕັ້ງ, ຄຸ້ມຄອງ, ບຳລຸງສ້າງ ແລະປະຕິບັດນະໂຍບາຍຕໍ່ພະນັກງານ, ລັດຖະກອນຂອງສະພາແຫ່ງຊາດ;

6. ກະກຽມ ແລະອໍານວຍຄວາມສະດວກໃຫ້ແກ່ກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ແລະກອງປະຊຸມກໍາມາທິການຂອງສະພາແຫ່ງຊາດ;
7. ຄຸ້ມຄອງການນໍາໃຊ້ງົບປະມານ, ວັດຖຸອຸປະກອນ ແລະຊັບສິນບັດຂອງສະພາແຫ່ງຊາດ;
8. ຮັບ, ຄົ້ນຄວ້າຄໍາຮ້ອງຂໍຄວາມເປັນທໍາຂອງພົນລະເມືອງ ແລະບັນຫາສັນຊາດ ເພື່ອສະເໜີໃຫ້ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
9. ຮັບຜິດຊອບຄວາມເປັນລະບຽບຮຽບຮ້ອຍຂອງສໍານັກງານສະພາແຫ່ງຊາດ;
10. ຊີ້ນໍາ, ຕິດຕາມກວດກາ ແລະຊຸກຍູ້ການເຄື່ອນໄຫວວຽກງານຂອງຫ້ອງວ່າການຄະນະສະມາຊິກສະພາແຫ່ງຊາດ ປະຈໍາເຂດເລືອກຕັ້ງ;
11. ຊີ້ນໍາ, ຄຸ້ມຄອງວຽກງານຂອງກົມ ແລະການຈັດຕັ້ງອື່ນໆທີ່ຂຶ້ນກັບຫ້ອງວ່າການທາງດ້ານບໍລິຫານ, ສະໜອງເອກະສານ, ຂໍ້ມູນ, ຂ່າວສານຕ່າງໆ ທີ່ຈໍາເປັນໃຫ້ແກ່ສະພາແຫ່ງຊາດ, ສື່ມວນຊົນ ແລະອົງການອື່ນໆທີ່ກ່ຽວຂ້ອງ;
12. ພົວພັນ ແລະປະສານສົມທົບກັບບັນດາກໍາມາທິການຂອງສະພາແຫ່ງຊາດ, ຫ້ອງວ່າການສູນກາງພັກ, ຫ້ອງວ່າການສໍານັກງານປະທານປະເທດ, ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
13. ພົວພັນ, ຮ່ວມມືກັບຫ້ອງວ່າການລັດຖະສະພາ ແລະອົງການຈັດຕັ້ງຕ່າງປະເທດ, ພາກພື້ນ ແລະສາກົນ;
14. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມການມອບໝາຍຂອງປະທານສະພາແຫ່ງຊາດ ຫລື ຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 54. ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ**

ໂຄງປະກອບຂອງຫ້ອງວ່າການສະພາແຫ່ງຊາດ ແມ່ນຄະນະປະຈໍາສະພາແຫ່ງຊາດເປັນຜູ້ກໍານົດ.

**ມາດຕາ 55. ຕາປະທັບຂອງຫ້ອງວ່າການສະພາແຫ່ງຊາດ**

ຫ້ອງວ່າການສະພາແຫ່ງຊາດ ມີຕາປະທັບສະເພາະຂອງຕົນ ຊຶ່ງເປັນຮູບວົງມົນ, ຢູ່ໃນກາງວົງມົນ, ມີເຄື່ອງໝາຍຊາດ, ເນື້ອໃນຢູ່ໃນຂອບວົງມົນເບື້ອງເທິງຂຽນວ່າ " ສະພາແຫ່ງຊາດ " ເບື້ອງລຸ່ມຂຽນວ່າ " ຫ້ອງວ່າການ " ຊຶ່ງຂັ້ນດ້ວຍຮູບດາວຫ້າແຈ.

## ໝວດທີ X
## ລະບອບວິທີເຮັດວຽກຂອງສະພາແຫ່ງຊາດ

**ມາດຕາ 56(ໃໝ່). ຫລັກການເຮັດວຽກ**

ສະພາແຫ່ງຊາດ, ຄະນະປະຈໍາ, ກໍາມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈໍາ

ເຂດເລືອກຕັ້ງ ແລະຫ້ອງວ່າການ ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ ໂດຍມີການສົມທົບລະຫວ່າງຄວາມຮັບຜິດຊອບຂອງໝູ່ຄະນະ ກັບການຍົກສູງຄວາມຮັບຜິດຊອບຂອງບຸກຄົນ,ເອົາກອງປະຊຸມເປັນບ່ອນປຶກສາຫາລື ແລະຕົກລົງບັນຫາຕາມສຽງສ່ວນຫລາຍ.

**ມາດຕາ 57(ໃໝ່). ວິທີເຮັດວຽກ**

ສະພາແຫ່ງຊາດ, ຄະນະປະຈໍາ, ກໍາມາທິການ, ຄະນະສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ ແລະຫ້ອງວ່າການ ເຮັດວຽກໂດຍມີການແບ່ງງານ ແລະແບ່ງຄວາມຮັບຜິດຊອບໃຫ້ບຸກຄົນ, ມີແຜນການ, ການກວດກາ, ສະຫລຸບ, ຖອດຖອນບົດຮຽນ ແລະປະຕິບັດລະບອບລາຍງານ, ຂໍຄວາມເຫັນຊີ້ນໍາຈາກຂັ້ນເທິງຂອງຕົນ, ປະສານສົມທົບກັບການຈັດຕັ້ງຕ່າງໆພາຍໃນສະພາແຫ່ງຊາດ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ, ພົວພັນ, ຮ່ວມມືກັບຕ່າງປະເທດ ແລະອົງການຈັດຕັ້ງສາກົນ ຕາມລະບຽບການ.

## ໝວດທີ XI
## ການສະເໜີ ແລະການພິຈາລະນາຮ່າງກົດໝາຍ

**ມາດຕາ 58. ການສະເໜີສ້າງ ຫລື ປັບປຸງກົດໝາຍ**

ອົງການຈັດຕັ້ງທີ່ມີສິດສະເໜີສ້າງຮ່າງກົດໝາຍ ຕາມທີ່ໄດ້ກໍານົດໄວ້ໃນລັດຖະທໍາມະນູນກ່ອນຈະສ້າງຮ່າງກົດໝາຍ ຫລືປັບປຸງກົດໝາຍໃດໜຶ່ງ ຕ້ອງເຮັດຄໍາສະເໜີຕໍ່ຄະນະປະຈໍາສະພາແຫ່ງຊາດ ໂດຍແຈ້ງຈຸດປະສົງ ແລະເຫດຜົນຂອງການສ້າງຮ່າງກົດໝາຍ ຫລືປັບປຸງກົດໝາຍນັ້ນ.

ຄະນະປະຈໍາສະພາແຫ່ງຊາດ ຕ້ອງຕອບຄໍາສະເໜີດັ່ງກ່າວ ເປັນລາຍລັກອັກສອນຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ນັບແຕ່ວັນໄດ້ຮັບຄໍາສະເໜີນັ້ນເປັນຕົ້ນໄປ.

**ມາດຕາ 59. ການສະເໜີຮ່າງກົດໝາຍຕໍ່ຄະນະປະຈໍາສະພາແຫ່ງຊາດ**

ອົງການຈັດຕັ້ງທີ່ໄດ້ສ້າງຮ່າງກົດໝາຍ ຫລືປັບປຸງກົດໝາຍສໍາເລັດແລ້ວ ຕ້ອງສະເໜີຮ່າງກົດໝາຍນັ້ນ ໃຫ້ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ ຢ່າງຊ້າຫົກສິບວັນ ກ່ອນວັນເປີດກອງປະຊຸມສະພາແຫ່ງຊາດ.

**ມາດຕາ 60(ໃໝ່). ການຄົ້ນຄວ້າຮ່າງກົດໝາຍ**

ຄະນະປະຈໍາສະພາແຫ່ງຊາດຈະມອບຮ່າງກົດໝາຍ ໃຫ້ກໍາມາທິການກົດໝາຍ, ກໍາມາທິການອື່ນທີ່ກ່ຽວຂ້ອງ ແລະແຕ່ງຕັ້ງອະນຸກໍາມະການ ເພື່ອຄົ້ນຄວ້າລະອຽດ, ກວດກາຮອບດ້ານແລ້ວລາຍງານ ໃຫ້ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ.

ຄະນະປະຈໍາສະພາແຫ່ງຊາດ ເປັນຜູ້ຕົກລົງກ່ຽວກັບການນໍາເອົາຮ່າງກົດໝາຍນັ້ນ ໄປປຶກສາຫາລືນໍາປະຊາຊົນດ້ວຍຮູບການຕ່າງໆ ແລ້ວນໍາມາຄົ້ນຄວ້າ, ປັບປຸງຄືນກ່ອນທີ່ຈະນໍາສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ພິຈາລະນາ.

**ມາດຕາ 61(ໃໝ່). ການສະເໜີ ແລະການພິຈາລະນາຮ່າງກົດໝາຍໃນກອງປະຊຸມສະພາແຫ່ງຊາດ**

ຄະນະປະຈຳສະພາແຫ່ງຊາດ ຕົກລົງໃຫ້ຜູ້ຕາງໜ້າອົງການຈັດຕັ້ງທີ່ສ້າງຮ່າງກົດໝາຍ ຫລືຫົວໜ້າກຳມາທິການທີ່ກ່ຽວຂ້ອງນັ້ນ ເປັນຜູ້ສະເໜີຮ່າງກົດໝາຍຕໍ່ກອງປະຊຸມສະພາແຫ່ງຊາດ.

ຫລັງຈາກນັ້ນ ປະທານກອງປະຊຸມສະພາແຫ່ງຊາດ ມອບໃຫ້ອະນຸກຳມະການທີ່ຖືກແຕ່ງຕັ້ງນັ້ນເປັນຜູ້ສະເໜີ, ອະທິບາຍເນື້ອໃນລະອຽດຂອງຮ່າງກົດໝາຍ ເປັນແຕ່ລະພາກ, ໝວດ, ມາດຕາ ເພື່ອໃຫ້ກອງປະຊຸມປະກອບຄວາມເຫັນ ແລ້ວພິຈາລະນາ, ຮັບຮອງເອົາດ້ວຍການລົງຄະແນນສຽງປິດລັບ ຫລື ເປີດເຜີຍ.

## ໝວດທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 62. ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາແຫ່ງຊາດ ເປັນຜູ້ຈັດຕັ້ງປະຕິບັດກົດຫມາຍສະບັບນີ້.

**ມາດຕາ 63. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 01/ ສພຊ ລົງວັນທີ 6 ພຶດສະພາ 2003.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ